ANNAMITE
RESOURCES

# ການເຄື່ອນຍ້າຍເທື່ອທຳອິດໃນຂົງເຂດການສຳຫຼວດທີ່ມີຄວາມຮັບຜິດຊອບໃນລາວ

## ພາບລວມ

*Annamite Resources* ແມ່ນບໍລິສັດຂຸດຄົ້ນບໍ່ແຮ່ ທີ່ເຫັນແນມເຫັນໂອກາດ ການລົງທຶນ ໃນ ສປປລາວ.

- ສປປ ລາວເປັນປະເທດທີ່ໄດ້ຮັບການຍອມຮັບວ່າຍັງມີການຂຸດຄົ້ນໜ້ອຍທີ່ສຸດຂອງບັນດາປະເທດເອເຊຍ
- ມີທ່າແຮງທີ່ໃຫຍ່ທີ່ສຸດໃນ *porphyry Cu-Au* ແລະກ່ຽວຂ້ອງກັບ *Skarn/carbonate* ແລະ ອາດຈະເປັນລະບົບບໍ່ແຮ່ທີ່ໃຫຍ່ ເຊັ່ນ: (*Sepon / Phu Bia*)
- ບໍ່ແຮ່ປະເພດນີ້ມັນເປັນສິ່ງທີ່ໃຫຍ່ ແລະ ຢູ່ເລີກເກີນກວ່າພຽງແຕ່ບໍ່ແຮ່ທົ່ວໄປເຊິ່ງຍັງບໍ່ທັນໄດ້ເປັນທີ່ຮູ້ຈັກແບບກວ້າງຂວາງສຳລັບທຸລະກິດ ແຮ່ທາດລັກສະນະນີ້.

**ທີມງານທາງດ້ານເຕັກນິກແລະທຸລະກິດຂອງພວກເຮົາມີ:**

- ມີປະສົບການເຮັດວຽກພາຍໃນປະເທດຫຼາຍກວ່າສິບປີ ແລະ ພວກເຮົາຍັງມີການປະສົບການເຮັດວຽກຮ່ວມກັບພາກລັດຖະບານໄດ້ເປັນຢ່າງດີ.
- ພວກເຮົາມີທີມງານທີ່ ຊ່ຽວຊານ ທາງດ້ານເຕັກນິກ ແລະ ການບໍລິຫານຈັດການ, ເຫັນໄດ້ຈາກການຄົ້ນພົບແຫຼ່ງຜະລິດບໍ່ແຮ່ ແລະ ສ້າງລາຍຮັບໄດ້ເປັນຈຳນວນຫຼາຍໃນຊຸມປີຜ່ານມາ.
- ພວກເຮົາມີຖານຂໍ້ມູນການຂະຫຍາຍຂະໜາດໃຫຍ່ ແລະ ຂໍ້ມູນການສຳຫຼວດທີ່ກວ້າງຂວາງບວກກັບປະສົບການການສຳຫຼວດຢ່າງຫຼວງຫຼາຍ ທັງນີ້ກໍ່ເພື່ອການກຳນົດເປົ້າໝາຍສູງສຸດ.
- ພວກເຮົາເຮັດການສຳຫຼວດແບບມີປະສິດທິພາບໂດຍຄຳນຶງເຖິງຄ່າໃຊ້ຈ່າຍທີ່ໜ້ອຍທີ່ສຸດແຕ່ໃຫ້ເກີດປະສິດທິພາບສູງສຸດ.





## ຮູບແບບການດຳເນີນທຸລະກິດ

- **ຮູບແບບທຸລະກິດຂອງພວກເຮົາແມ່ນ** ການຊອກຫາຄູ່ຮ່ວມທຶນທີ່ມີໂຄງການທີ່ດີ ແລະ ບໍ່ມີຄວາມສ່ຽງໂດຍສ້າງມູນຄ່າການລົງທຶນທີ່ມີປະສິດທິພາບເທົ່ານັ້ນ.
- **ແຜນຍຸດທະສາດຂອງພວກເຮົາ**ແມ່ນເພື່ອ ຮ່ວມມືກັບອົງກອນຕ່າງປະເທດທີ່ມີໃບອະນຸຍາດທີ່ຖືກຕ້ອງໂດຍບໍ່ມີຄວາມສ່ຽງ.
- **ການຮ່ວມທຶນຂອງພວກເຮົາ** ຈະເນັ້ນໜັກໃສ່ລາຍຈ່າຍໃນການຊອກຫາແຫຼ່ງຜະລິດ, ໂດຍສະເພາະແມ່ນການຂຸດເຈາະ
- **ພວກເຮົາມີຈຸດປະສົງ** ເພື່ອສ້າງຜົນປະໂຫຍດຮ່ວມກັນ ລະຫວ່າງນັກລົງທຶນ ແລະ ຄູ່ຮ່ວມທຸລະກິດ ເພື່ອການສ້າງມູນຄ່າ ແລະ ຜົນກຳໄລໃຫ້ແກ່ທຸລະກິດ.

## ການລົງທຶນ

ຜູ້ສ້າງຕັ້ງບໍລິສັດໄດ້ລົງທຶນໄປແລ້ວຈຳນວນ *130,000* ໂດລາ ແລ້ວ. ສຳລັບຂັ້ນຕໍ່ໄປແມ່ນການຮ່ວມທຶນຈາກຄົນອ້ອມຂ້າງ ອາດຈະເປັນ ເພື່ອນຫຼືຄອບຄົວ ເພື່ອໃຫ້ສາມາດເລີ່ມການສຳຫຼວດຢ່າງຈິງຈັງ.
ນອກຈາກນີ້ ຍັງຈະມີຄວາມສາມາດເປັນໄປໄດ້ໃນການເພີ່ມນັກລົງທຶນ 1 ຫຼື 2 ຕາມຄວາມເໝາະສົມ, ເຊິ່ງ *Annamite* ຕ້ອງການ 2 ລ້ານໂດລາພາຍໃນທ້າຍປີ 2019, ເພື່ອສຳເລັດການກວດສອບສະຖານະພາບ ແລະ ດຳເນີນການ, ທັ້ງນີ້ກໍ່ເພື່ອເລີ່ມການສຳຫຼວດພາຍໃນທ້າຍປີ *2019 -2020* ນີ້. ເຊິ່ງ *Annamite* ມີແຜນຈະເຂົ້າສູ່ຕະຫຼາດຫຼັກຊັບ ຢູ່ປະເທດ ອໍອສເຕຼເລຍ ASX ຫຼື ແຄນາດາ (ໂຕລອນໂຕ ) *TSX*- ໃນລະຫວ່າງ ໄຕມາດທີ1 ຂອງປີ *2021.*
ທີມງານ *Annamite* ໄດ້ກຳນົດ 8 ເປົ້າຫມາຍຢ່າງຊັດເຈນ ໂດຍອີງໃສ່ຄວາມຮູ້ທາງດ້ານພູມສັນຖານ ແລະ ການດຳເນີນທຸລະກິດໃນ ສປປລາວ. ທີມງານດ້ານເຕັກນິກທີ່ມີປະສົບການຂອງພວກເຮົາໄດ້ລົງມືເຮັດວຽກຢ່າງເຕັມທີ່, ໂຄງການນີ້ແມ່ນພ້ອມແລ້ວສຳລັບການດຳເນີນການ ແລະ ພວກເຮົາສາມາດສ້າງມູນຄ່າໄດ້ໂດຍການຂະຫຍາຍຕົວຢ່າງວ່ອງໄວ. ປັດຈຸບັນພວກເຮົາກຳລັງດຳເນີນການເຈລະຈາ ອີກ 4 ໂຄງການ ໂດຍຄາດການວ່າຈະມີການສຳຫຼວດຫຼັງຈາກໜົດລະດູຝົນ ພາຍໃນເດືອນຕຸລາ *2019.*



## ກົດໝາຍໃໝ່ກ່ຽວກັບ ບໍ່ແຮ່

ສປປ ລາວໄດ້ຮັບການຍອມຮັບວ່າການຂຸດຄົ້ນບໍ່ແຮ່ແມ່ນມີຜົນກະທົບສຳຄັນຕໍ່ເສດຖະກິດພາຍໃນປະເທດ, ໂດຍ ໃນເດືອນກໍລະກົດ ປີ *2018* ໄດ້ມີການປະກາດໃຊ້ກົດຫມາຍບໍ່ແຮ່ສະບັບໃໝ່. ເມື່ອທຽບກັບກົດຫມາຍສະບັບປີ *2011* ເຫັນວ່າກົດຫມາຍໃຫມ່ມີສະພາບຄ່ອງ ແລະ ມີຜົນດີກັບນັກລົງທຶນຫຼາຍກວ່າ, ເພີ່ມເຕີມຈາກສະບັບເກົ່າ ຂໍ້ກົດໝາຍໃໝ່ໄດ້ໃຫ້ຄວາມສຳຄັນ ແລະ ສຸມໃສ່ ໂຄງການທີ່ມີຢູ່ແລ້ວເຊິ່ງໄດ້ຢຸດເຊົາເນື່ອງຈາກນັກລົງທຶນມີກຳລັງຊັບສິນທີ່ບໍ່ພຽງພໍ ຫຼື ມີຂໍ້ຈຳກັດເລື່ອງທັກສະຄວາມສາມາດໃນການຂຸດຄົ້ນ.

**5 ຂັ້ນຕອນສຳລັບການຂຸດຄົ້ນແຮ່ທາດໃນ ສປປລາວ**

1. ເລີ່ມຊອກຫາສະຖານທີ
2. ກວດຫາແຮ່ທາດ
3. ເລີ່ມການຂຸດເຈາະເພື່ອສຳຫຼວດ
4. ສຶກສາຄວາມເປັນໄປໄດ້
5. ດຳເນີນທຸລະກິດບໍ່ແຮ່

## ການພັດທະນາແບບຍືນຍົງ

*Annamite* ມຸ້ງໝັ້ນທີ່ຈະສຳຫຼວດຢ່າງມີຄວາມຮັບຜິດຊອບ. ເວົ້າໄດ້ວ່າ- ໝາຍເຖິງການເຮັດໃນສິ່ງທີ່ຖືກຕ້ອງ, ການຕັດສິນໃຈທາງທຸລະກິດຂອງພວກເຮົາ ແນໃສ່ການພິຈາລະນາຢ່າງຮອບຄອບກ່ຽວກັບບັນຫາສຸຂະພາບແລະຄວາມປອດໄພຂອງປະຊາຊາຊົນ, ການປົກປັກຮັກສາສິ່ງແວດລ້ອມແລະສະຫວັດດີການຂອງຊຸມຊົນໃນທຸກຂັ້ນຕອນຂອງການສຳຫຼວດແລະການພັດທະນາໂຄງການ ພວກເຮົາກຳນົດຕາມມາດຕະຖານສາກົນ ໂດຍ *EITI and Voluntary Principles* ດ້ານຄວາມຮັບຜິດຊອບຕໍ່ສັງຄົມ.

EITI Extractive Industries Transparency Initiative

VOLUNTARY PRINCIPLES ON SECURITY + HUMAN RIGHTS

**Annamite Resources Holdings Pte.** Ltd. 1 Coleman Street, Singapore 179803
*For more information on our work, visit www.annamite-resources.com/*
*To partner with Annamite, email Didier Fohlen at didier@annamite-resources.com.*

ANNAMITE RESOURCES